# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ..........................................ໜ້າ 01 - 07

II. ການເຄື່ອນໄຫວວຽກງານຂອງການນໍາຄະນະພົວພັນຕ່າງປະເທດສູນກາງພັກ.............ໜ້າ 08- 14


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈໍາເດືອນ **ພຶດສະພາ ແລະ ມິຖຸນາ 2021**


**ສໍານັກງານຕັ້ງຢູ່ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ໂທລະສັບ 021 417470,**

**Fax 021 414043, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຢູ່ ສປປ ລາວ

1) ໂດຍຕອບສະໜອງຕາມການເຊື້ອເຊີນຂອງ ສະຫາຍ ຫງວຽນຝູ້ຈ້ອງ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍພັນລະຍາ ແລະ ສະຫາຍ ຫງວຽນຊວັນຟຸກ, ປະທານປະເທດແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ພ້ອມດ້ວຍພັນລະຍາ. ໃນຕອນເຊົ້າຂອງວັນທີ 28 ມິຖຸນາ 2021, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ ພ້ອມດ້ວຍພັນລະຍາ ແລະ ຄະນະຜູ້ແທນຂັ້ນສູງ ພັກ, ລັດ ແຫ່ງ ສປປ ລາວ ໄດ້ເດີນທາງໄປຢ້ຽມຢາມສັນຖະວະໄມຕີ ສສ.ຫວຽດນາມ ຢ່າງເປັນທາງການ ແຕ່ວັນທີ 28-29/6/2021.

ໃນໄລຍະຢູ່ຢ້ຽມຢາມ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ ໄດ້ພົບປະກັບການນຳຂັ້ນສູງສຸດຂອງ ສສ ຫວຽດນາມ, ສະຫາຍ ຫງວຽນຝູ້ຈ້ອງ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ; ສະຫາຍ ຫງວຽນຊວັນຟຸກ, ກຳມະການກົມການເມືອງສູນກາງພັກ, ປະທານປະເທດແຫ່ງ ສສ ຫວຽດນາມ; ສະຫາຍ ເວືອງດິງເຫວະ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດຫວຽດນາມ; ສະຫາຍ ຟ້ອມມິງຈິງ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ສສ ຫວຽດນາມ; ວາງພວງມາລາທີ່ອະນຸສາວະລີນັກຮົບວິລະຊົນແຫ່ງຊາດຫວຽດນາມ ແລະ ວາງພວງດອກໄມ້ທີ່ສຸສານປະທານໂຮ່ຈີມິນ; ພົບປະກັບອະດີດເລຂາທິການໃຫຍ່ ນົງດຶກແມ້ງ, ອະດີດປະທານປະເທດ ເຈີນດຶກເລືອງ; ຢ້ຽມຢາມ ແລະ ມີຄຳເຫັນຕໍ່ພະນັກງານ, ຄູອາຈານ, ນັກຄົ້ນຄວ້າ ສະຖາບັນການເມືອງແຫ່ງຊາດ ໂຮ່ຈີມິນ; ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ, ສະມາຄົມມິດຕະພາບ ຫວຽດນາມ-ລາວ ຂັ້ນສູນກາງ, ຄະນະປະສານງານທະຫານອາສາສະໝັກ ແລະ ຊ່ຽວຊານຫວຽດນາມ ຢູ່ລາວ.

ການຢ້ຽມຢາມສັນຖະວະໄມຕີ ສສ ຫວຽດນາມ ຢ່າງເປັນທາງການຂອງ ສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ເປັນເຫດການທີ່ສຳຄັນໃນການພົວພັນລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ເພາະດຳເນີນໄປໃນທ່າມກາງບັນຍາກາດທີ່ທັງ ສອງພັກ, ສອງລັດ ຫາກໍສຳເລັດ ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ ແລະ ເປັນປີທຳອິດຂອງການ ຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ - ສັງຄົມ ຂອງແຕ່ລະພັກ, ແຕ່ລະປະເທດ ທັງເປັນໂອກາດອັນດີໃຫ້ແກ່ສອງຝ່າຍ ໄດ້ປຶກສາຫາລືບັນຫາຍຸດທະສາດ ແລະ ທິດທາງການຮ່ວມມືໃນຕໍ່ໜ້າ, ເປັນການປະກອບສ່ວນອັນສຳຄັນ ເຂົ້າໃນການເພີ່ມພູນຄູນສ້າງ ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ນັບມື້ກ້າວເຂົ້າສູ່ລວງເລິກ, ມີປະສິດທິຜົນ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

2) ໃນວັນທີ 29 ມິຖຸນາ 2021 ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ນຳພາຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມໂຕະມົນ ລະຫວ່າງ ພັກຣັດເຊຍເອກະພາບ ແລະ ພັກການເມືອງຂອງປະເທດອາຊຽນ ຜ່ານຮູບແບບວິດີໂອທາງໄກ ໂດຍການເປັນເຈົ້າພາບຂອງພັກຣັດເຊຍເອກະພາບ ພາຍໃຕ້ຫົວຂໍ້: "ບົດບາດຂອງບັນດາກຳລັງການເມືອງທີ່ມີຄວາມຮັບຜິດຊອບຂອງ ຣັດເຊຍ ແລະ ບັນດາປະເທດອາຊຽນ ໃນການເສີມສ້າງໂຄງສ້າງດ້ານຄວາມໝັ້ນຄົງ ແລະ ການຮ່ວມມືໃນພາກພື້ນອາຊີ-ປາຊີຟິກ", ທັງເປັນການສະເຫລີມສະຫລອງຄູ່ຮ່ວມອາຊຽນ-ຣັດເຊຍຄົບຮອບ 25 ປີ, ເຊິ່ງເປັນຂີດໝາຍສຳຄັນແຫ່ງການສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືດ້ານພັກ ລະຫວ່າງ ພັກການເມືອງປະເທດອາຊຽນ ແລະ ພັກຣັດເຊຍເອກະພາບ ເພື່ອປະກອບສ່ວນຊຸກຍູ້ການຮ່ວມມືດ້ານລັດ ລະຫວ່າງ ອາຊຽນ ແລະ ຣັດເຊຍ ໃນການຮັບມືກັບສິ່ງທ້າທາຍຕ່າງໆ ແລະ ເສີມຂະຫຍາຍການຮ່ວມມືທີ່ເປັນຮູບປະທຳ ໃນພາກພື້ນອາຊີ-ປາຊີຟິກ. ເຂົ້າຮ່ວມໃນກອງປະຊຸມດັ່ງກ່າວ ມີປະທານພັກຣັດເຊຍເອກະພາບ ແລະ ການນຳຂັ້ນສູງສຸດຈາກ 6 ພັກການເມືອງຂອງປະເທດອາຊຽນ.

ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ປະກອບຄໍາເຫັນໃນກອງປະຊຸມ ໂດຍໄດ້ຕີລາຄາສູງ ແລະ ຊົມເຊີຍ ການຈັດກອງປະຊຸມຄັ້ງນີ້ຂອງພັກຣັດເຊຍເອກະພາບ; ສະແດງຄວາມປິຕິຍິນດີທີ່ການພົວພັນຮ່ວມມື ອາຊຽນ-ຣັດເຊຍ ຕະຫຼອດໄລຍະຜ່ານມາ ໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ, ມີປະສິດທິຜົນ ແລະ ນັບມື້ນັບເຂົ້າສູ່ລວງເລິກ, ບັນລຸໄດ້ຜົນສໍາເລັດທີ່ໜ້າເພິ່ງພໍໃຈຫລາຍດ້ານ ລວມທັງດ້ານການເມືອງ ແລະ ຄວາມໝັ້ນຄົງ, ປະກອບສ່ວນສໍາຄັນເຂົ້າໃນການຄໍ້າປະກັນຄວາມໝັ້ນຄົງ ແລະ ການຮ່ວມມື ໃນພາກພື້ນອາຊີ-ປາຊີຟິກ; ເນັ້ນໜັກເຖິງຄວາມຮັບຜິດຊອບ ແລະ ຄວາມມຸ່ງມາດປາຖະໜາຂອງບັນດາປະເທດ ແລະ ພັກການເມືອງໃນພາກພື້ນ ໃນການຮັບປະກັນ ແລະ ເສີມຂະຫຍາຍຄວາມໝັ້ນຄົງ ແລະ ສົ່ງເສີມການຮ່ວມມືໃນພາກພື້ນ ທັງໃນສະເພາະໜ້າ ແລະ ຍາວນານ. ພ້ອມນີ້, ຍັງໄດ້ສະແດງຄວາມພາກພູມໃຈທີ່ເຫັນວ່າ ການພົວພັນ ລາວ - ຣັດເຊຍ ກໍຄື ການພົວພັນລະຫວ່າງພັກ ປປ ລາວ ແລະ ພັກຣັດເຊຍເອກະພາບ, ເຊິ່ງເປັນການພົວພັນມິດຕະພາບທີ່ມີມູນເຊື້ອມາຍາວນານ ແລະ ມີການຮ່ວມມືທີ່ດີ ບົນພື້ນຖານຄວາມໄວ້ເນື້ອເຊື່ອໃຈຊຶ່ງກັນແລະກັນ, ການຊ່ວຍເຫຼືອກັນ ແລະ ການເປັນຄູ່ຮ່ວມມືຍຸດທະສາດດ້ານຄວາມໝັ້ນຄົງໃນພາກພື້ນອາຊີ-ປາຊີຟິກນັ້ນ ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ແລະ ມີບາດກ້າວໃໝ່ທີ່ຕັ້ງໜ້າໃນຫລາຍຂົງເຂດ ເປັນຕົ້ນແມ່ນຂົງເຂດການເມືອງ ແລະ ຄວາມໝັ້ນຄົງ; ເຊື່ອໝັ້ນຢ່າງໜັກແໜ້ນວ່າ ການເພີ່ມທະວີການພົວພັນຮ່ວມມື ລາວ-ຣັດເຊຍ ຂຶ້ນສູ່ລະດັບໃໝ່ທີ່ສູງກວ່າເກົ່າໃນຕໍ່ໜ້າ ຈະນໍາມາເຊິ່ງຜົນປະໂຫຍດໃຫ້ແກ່ສອງຝ່າຍ ກໍ່ຄື ການຮ່ວມມືອາຊຽນ-ຣັດເຊຍ; ຢືນຢັນຄວາມໝາຍໝັ້ນຂອງພັກ ແລະ ລັດຖະບານ ສປປ ລາວ ໃນການສືບຕໍ່ຮ່ວມມືໃນຂົງເຂດຕ່າງໆ ໂດຍສະເພາະແມ່ນຂົງເຂດການເມືອງ-ຄວາມໝັ້ນຄົງ ກັບບັນດາພັກການເມືອງໃນອາຊຽນ, ພັກຣັດເຊຍເອກະພາບ ແລະ ພັກການເມືອງອື່ນໆໃນໂລກ ເພື່ອສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາ ຢູ່ບັນດາປະເທດໃນພາກພື້ນ ແລະ ໃນໂລກ.

ບັນດາຜູ້ແທນກອງປະຊຸມ ໄດ້ຮັບຮອງເອົາຖະແຫຼງການສຸດທ້າຍຂອງກອງປະຊຸມ ເຊິ່ງໄດ້ເຫັນດີຍົກສູງບົດບາດຂອງບັນດາພັກການເມືອງຂອງປະເທດອາຊຽນ ແລະ ພັກຣັດເຊຍເອກະພາບ ໃນການເພີ່ມທະວີການຮ່ວມມືດ້ານການເມືອງ ແລະ ຄວາມໝັ້ນຄົງໃນພາກພື້ນອາຊີ-ປາຊີຟິກ; ຊຸກຍູ້ການຮ່ວມມືລະຫວ່າງບັນດາພັກການເມືອງ ແລະ ລະຫວ່າງບັນດາລັດໃນຫຼາຍລະດັບ ເພື່ອຮ່ວມກັນປະເຊີນໜ້າກັບສິ່ງທ້າທາຍລວມຂອງພາກພື້ນ ແລະ ສາກົນ ໂດຍສະເພາະ ແມ່ນການປ້ອງກັນ ແລະ ສະກັດກັ້ນພະຍາດໂຄວິດ-19, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ຄອມພິວເຕີ; ເຫັນດີສຶກສາຄວາມເປັນໄປໄດ້ໃນການຮ່ວມມືເພື່ອຮັບປະກັນຄວາມໝັ້ນຄົງສາກົນ, ດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ໂທລະຄົມມະນາຄົມ, ດ້ານສະບຽງອາຫານ, ການປົກປັກຮັກສາສິ່ງແວດລ້ອມ, ການນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງສົມເຫດສົມຜົນ, ການທ່ອງທ່ຽວ, ມະນຸດສະທໍາ ແລະ ອື່ນໆ.

## 2. ສະພາບການສາກົນ

### 1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ

30/6/2021, ຕົວເລກຜູ້ຕິດເຊື້ອໂຄວິດ-19 ທັງໝົດມີ 182,620,288 ກໍລະນີ, ເສຍຊີວິດ 3,954,799 ຄົນ ແລະ ປິ່ນປົວຫາຍດີ 167,232,344 ກໍລະນີຢູ່ 200 ກວ່າປະເທດ ແລະ ເຂດປົກຄອງຕ່າງໆໃນທົ່ວໂລກ. ຈໍານວນຜູ້ຕິດເຊື້ອຫຼາຍທີ່ສຸດໃນໂລກ 3 ອັນດັບຍັງແມ່ນ ອາເມລິກາ ມີຜູ້ຕິດເຊື້ອ 34,527,493 ກໍລະນີ, ເສຍຊີວິດ 619,980 ຄົນ; ອິນເດຍ ມີຜູ້ຕິດເຊື້ອ 30,362,848 ກໍລະນີ, ເສຍຊີວິດ 398,484 ຄົນ; ບຣາຊິນ ມີຜູ້ຕິດເຊື້ອ 18,513,305 ກໍລະນີ, ເສຍຊີວິດ 516,119 ຄົນ; ໃນຂົງເຂດປະເທດອາຊຽນ ຈໍານວນຜູ້ຕິດເຊື້ອຫຼາຍທີ່ສຸດແມ່ນປະເທດ ອິນໂດເນເຊຍ ມີຜູ້ຕິດເຊື້ອທັງໝົດ 2,156,465 ກໍລະນີ, ເສຍຊີວິດ 58,024 ຄົນ; ຟີລິບປິນ ມີຜູ້ຕິດເຊື້ອທັງໝົດ 1,412,559 ຄົນ, ເສຍຊີວິດ 24,662 ຄົນ ແລະ ມາເລເຊຍ ມີຜູ້ຕິດເຊື້ອທັງໝົດ 745,703 ກໍລະນີ, ເສຍຊີວິດ 5,108 ຄົນ.

2) **ສປປ ລາວ ໄດ້ຮັບເລືອກຕັ້ງເປັນ ຮອງປະທານຮ່ວມສະມັດຊາໃຫຍ່ ສປຊ ສະໄໝທີ 76**

Mofa.gov.la ວັນທີ 7/06/ 2021, ກອງປະຊຸມແບບເປີດກວ້າງ ຂອງ ສະມັດຊາໃຫຍ່ ສປຊ ສະໄໝທີ 75 ຄັ້ງທີ 72 ໄດ້ໄຂຂຶ້ນທີ່ສຳນັກງານໃຫຍ່ອົງການ ສປຊ ນະຄອນນິວຢອກ, ສ.ອາເມລິກາ, ພາຍໃຕ້ການເປັນປະທານຂອງ ທ່ານ ໂວນ ຄານ ບອສເກີ (Volkan Bozkir), ປະທານສະມັດຊາໃຫຍ່ ສປຊ ສະໄໝທີ 75. ກອງປະຊຸມໄດ້ເລືອກເອົາ ທ່ານ Abdulla Shahid, ລັດຖະມົນຕີ ກະຊວງການຕ່າງປະເທດ ຂອງ ມາວດີບ ເປັນປະທານສະມັດຊາໃຫຍ່ ສປຊ ສະໄໝທີ 76 ແລະ ເລືອກເອົາຮອງປະທານສະມັດຊາໃຫຍ່ ສປຊ ສະໄໝທີ 76 ຈຳນວນ 21 ປະເທດ, ເຊິ່ງເປັນຕົວແທນຈາກແຕ່ລະພາກພື້ນ, ໃນນັ້ນຈາກພາກພື້ນອາຊີ-ປາຊີຟິກ ມີ 4 ປະເທດໄດ້ຮັບເລືອກ ຄື: ບັງກະລາເທດ, ກູເວດ, ສປປ ລາວ ແລະ ຟີລິບປິນ. ປະທານ ແລະ ຮອງປະທານສະມັດຊາໃຫຍ່ ສປຊ ຈະສືບຕໍ່ປະຕິບັດໜ້າທີ່ໃນສະພາບແວດລ້ອມສາກົນ ເປັນຕົ້ນການຮ່ວມມືຟື້ນຟູສະພາບວິກິດຈາກການແຜ່ລະບາດຂອງພະຍາດໂຄວິດ-19, ການແກ້ໄຂຂໍ້ຂັດແຍ່ງທີ່ຍັງເກີດຂຶ້ນຢູ່ບາງພາກພື້ນໃນໂລກ, ບັນຫາເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ອື່ນໆ.

3) **ກອງປະຊຸມລັດຖະມົນຕີຕ່າງປະເທດ ອາຊຽນ-ຈີນ ສະໄໝພິເສດ**

CGTN, ວັນທີ 8/6/2021; ສປ ຈີນ ໄດ້ເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີຕ່າງປະເທດ ອາຊຽນ-ຈີນ ສະໄໝພິເສດ ໃນໂອກາດສະເຫຼີມສະຫຼອງການພົວພັນ ຈີນ-ອາຊຽນ ຄົບຮອບ 30 ປີ ຢູ່ທີ່ນະຄອນ Chongqing ຂອງ ສປ ຈີນ. ທ່ານ ຫວັງ ອີ້, ລັດຖະມົນຕີການຕ່າງປະເທດ ສປ ຈີນ ໄດ້ມີຄຳເຫັນວ່າ ສປ ຈີນ-ອາຊຽນ ໃຫ້ຄວາມສຳຄັນກັບ 30 ປີຜ່ານມາ, ເຊິ່ງໃນຕໍ່ໜ້າໃຫ້ສືບຕໍ່ຮັກສາ ແລະ ພັດທະນາການຮ່ວມມືໃນພາກພື້ນຂອງອາຊີຕາເວັນອອກ, ສ້າງລະດັບການພົວພັນຄູ່ຮ່ວມມືຍຸດທະສາດ ຈີນ-ອາຊຽນ ໃຫ້ສູງຂຶ້ນ, ສ້າງປະຊາຄົມຮ່ວມຊະຕາກຳທີ່ໃກ້ຊິດຍິ່ງຂຶ້ນ, ຮຽກຮ້ອງໃຫ້ຍົກລະດັບການພົວພັນ ສປ ຈີນ-ອາຊຽນ ໄປສູ່ຄູ່ຮ່ວມມືຍຸດທະສາດຮອບດ້ານ ແລະ ບັນລຸຂໍ້ຕົກລົງເບື້ອງຕົ້ນກ່ຽວກັບກົດແຫ່ງການປະພຶດໃນທະເລຈີນໃຕ້ (COC). ພ້ອມກັນນັ້ນ, ການຟື້ນຟູເສດຖະກິດພາຍຫຼັງການລະບາດຂອງເຊື້ອໂຄວິດ-19; ສປ ຈີນ ຈະສະໜັບສະໜູນການຈັດຕັ້ງປະຕິບັດຕາມກອບການຟື້ນຟູຮອບດ້ານຂອງອາຊຽນ ແລະ ເລັ່ງລັດສ້າງແຜນປະຕິບັດງານຂອງການຮ່ວມມືໃນເສດຖະກິດດິຈິຕອນ; ສຳລັບ COC ສປ ຈີນ ພ້ອມແລ້ວທີ່ຈະເພີ່ມທະວີການເຈລະຈາ ແລະ ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ແລະ ເພີ່ມຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ ພ້ອມທັງຮຽກຮ້ອງໃຫ້ທັງສອງຝ່າຍຈົ່ງຍຶດໝັ້ນລັດທິຫຼາຍຝ່າຍ ແລະ ຮ່ວມກັນສົ່ງເສີມຄ່ານິຍົມຂອງອາຊຽນ. ນອກນີ້, ອາຊຽນ-ຈີນ ໄດ້ຕົກລົງເຫັນດີທີ່ຈະເພີ່ມທະວີການຮ່ວມມືໃນຂະແໜງການຕ່າງໆເປັນຕົ້ນແມ່ນການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງເຊື້ອໂຄວິດ-19, ການຟື້ນຟູເສດຖະກິດ, ການເຊື່ອມໂຍງ, ການຊ່ວຍເຫຼືອ ແລະ ຮັບມືກັບໄພພິບັດ ແລະ ການພັດທະນາແບບຍືນຍົງ.

4) **ການພົວພັນ ຈີນ-ອາເມລິກາ**

CGTN, ວັນທີ 08/06/2021, ສະພາສູງ ຂອງ ສ. ອາເມລິກາ ໄດ້ຮັບຮອງເອົາກົດໝາຍວ່າດ້ວຍການແຂ່ງຂັນທາງດ້ານເຕັກໂນໂລຊີ ເພື່ອແຂ່ງຂັນກັບບັນດາປະເທດຄູ່ແຂ່ງເປັນຕົ້ນແມ່ນ ສປ ຈີນ ດ້ວຍຄະແນນສຽງ 68/32 ສຽງ, ກົດໝາຍດັ່ງກ່າວມີຊື່ວ່າ ນະວັດຕະກຳ ແລະ ການປະຕິບັດການແຂ່ງຂັນຂອງ ສ. ອາເມລິກາ ໃນປີ 2021 ( United States Innovation and Competition Act of 2021 - USICA), ຊຶ່ງຈະໃຊ້ງົບປະມານ 190 ຕື້ໂດລາສະຫະລັດ ເພື່ອສ້າງຄວາມເຂັ້ມແຂງທາງດ້ານເຕັກໂນໂລຊີ ແລະ ການຄົ້ນຄ້ວາ ຂອງ ສ. ອາເມລິກາ, ໃນນັ້ນ 50 ຕື້ໂດລາ ຈະເພີ່ມເຂົ້າໃນການຜະລິດ ແລະ ຄົ້ນຄ້ວາກ່ຽວກັບອຸປະກອນດຳເນີນການຂະໜາດນ້ອຍ( ຊິບ) ແລະ ອຸປະກອນການສື່ສານ. ຂະນະທີ່ ທ່ານ ໂຈ ໄບເດີນ, ປະທານາທິບໍດີ ສ. ອາເມລິກາ ໄດ້ມີຄຳເຫັນວ່າ ໃນສັດຕະວັດທີ 21 ເປັນ ຍຸກແຫ່ງການແຂ່ງຂັນທີ່ບໍ່ໃຊ້ປືນ, ແຕ່ລະປະເທດສືບຕໍ່ລົງທຶນເຂົ້າໃນການຄົ້ນຄ້ວາ ແລະ ພັດທະນາຕົນເອງ. ອາເມລິກາບໍ່ອາດຍອມຮັບສະຖານະພາບເປັນຜູ້ຕາມຫຼັງໄດ້, ສະນັ້ນ ອາເມລິກາຈະຕ້ອງຮັກສາຕຳແໜ່ງເປັນຊາດທີ່ມີນະວັດຕະກຳ ແລະ ຜະລິດຕະພັນທີ່ທັນສະໄໝຂອງໂລກ.

ໂຄສົກກະຊວງການຕ່າງປະເທດ ສປ ຈີນ ໄດ້ ອອກມາຕອບໂຕ້ກົດໝາຍດັ່ງກ່າວວ່າ ເປັນການຕ້ານຈີນດ້ວຍການປະເຊີນໜ້າຫຼາຍຮູບການ, ສປ ຈີນ ບໍ່ເຄີຍທີ່ຈະຍາດແຍ່ງອຳນາດ, ແທນທີ່ ແລະ ແຂ່ງຂັນກັບ ສ. ອາເມລິກາ, ແຕ່ການພັດທະນາຕົນເອງກາຍເປັນວິໄສທັດທີ່ດີກວ່າ ແລະ ເພື່ອໃຫ້ປະຊາຊົນມີຊີວິດການເປັນຢູ່ທີ່ດີ. ສປ ຈີນ ຕ້ອງການມີສາຍພົວພັນທີ່ດີ ກັບ ສ. ອາເມລິກາ ໂດຍປາສະຈາກຂໍ້ຂັດແຍ່ງ, ການປະເຊີນໜ້າ ແລະ ເຄົາລົບຫຼັກການຮ່ວມມືຫຼາຍຝ່າຍ ໂດຍຕ່າງຝ່າຍຕ່າງມີຜົນປະໂຫຍດ.

5) **ການພົວພັນ ຈີນ - ລັດເຊຍ**

CGTN, ວັນທີ 24 ພຶດສະພາ 2021, ທ່ານ Yang Jiechi, ກຳມະການກົມການເມືອງສູນກາງພັກ, ຫົວໜ້າຫ້ອງການວຽກງານການຕ່າງປະເທດ ສູນກາງພັກກອມມູນິດຈີນ ໄດ້ເດີນທາງຢ້ຽມຢາມ ລັດເຊຍ ແຕ່ວັນທີ 24-27 ພຶດສະພາ 2021 ເພື່ອເຂົ້າຮ່ວມກອງປະຊຸມ ປຶກສາຫາລືຄວາມໝັ້ນຄົງດ້ານຍຸດທະສາດ ຈີນ - ຣັດເຊຍ ຄັ້ງທີ 16 ແລະ ພົບປະກັບ ທ່ານພົນເອກ Nikolai Patrushev, ເລຂາທິການສະພາຄວາມໝັ້ນຄົງແຫ່ງຊາດຂອງລັດເຊຍ. ສອງຝ່າຍໄດ້ປຶກສາຫາລືຮ່ວມກັນກ່ຽວກັບວຽກງານຕ້ານ ສະກັດກັ້ນການແຜ່ລະບາດຂອງເຊື້ອພະຍາດໂຄວິດ 19, ສະຖານະການໃນອັຟການິດສະຖານ, ຂະບວນການສ້າງສັນຕິພາບລະຫວ່າງ ອິດສະລະແອນ - ປາແລັດສະຕິນ ແລະ ການຮ່ວມມືທາງດ້ານພະລັງງານນິວເຄຼຍ ແລະ ອາວະກາດ. ພ້ອມກັນນັ້ນ, ສອງຝ່າຍຍັງປຶກສາຫາລືກ່ຽວກັບການເສີມຂະຫຍາຍສົນທິສັນຍາ" ບ້ານໃກ້ເຮືອນຄຽງທີ່ດີ ແລະ ຄູ່ຮ່ວມມືໃນຖານະມິດສະຫາຍທີ່ດີ". ການພົວພັນ ສປ ຈີນ-ລັດເຊຍ ແມ່ນຢູ່ໃນລະດັບສູງສຸດໃນປະຫວັດສາດ.

6) **ສ. ອາເມລິກາ**

Reuters, ວັນທີ 09/06/2021, ທ່ານ ໂຈ ໄບເດິນ, ປະທານາທິບໍດີ ສ. ອາເມລິກາ ໄດ້ເດີນທາງຢ້ຽມຢາມສະຫະພາບເອີລົບ ເປັນເວລາ 08 ວັນ ນັບແຕ່ວັນທີ 09 – 16/06/2021 ເພື່ອຟື້ນຟູສາຍພົວພັນກັບພັນທະມິດໃນພາກພື້ນດັ່ງກ່າວ ໂດຍສະເພາະ ແມ່ນສາຍພົວພັນ ສ. ອາເມລິກາ - ລັດເຊຍ ແລະ ເປັນການຢ້ຽມຢາມຕ່າງປະເທດຄັ້ງທຳອິດພາຍຫຼັງທີ່ທ່ານໄດ້ຮັບເລືອກຕັ້ງເປັນປະທານາທິບໍດີຄົນໃໝ່ຂອງ ສ. ອາເມລິກາ. ການຢ້ຽມຢາມຄັ້ງນີ້ ທ່ານ ໂຈ ໄບເດິນ, ໄດ້ເຂົ້າຮ່ວມກອງປະຊຸມຂອງກຸ່ມປະເທດອຸດສາຫະກຳທັນສະໄໝ ຫຼື ກຸ່ມ G7 ທີ່ຈັດຂຶ້ນທີ່ເມືອງ Cornwall, ປະເທດອັງກິດ ເພື່ອປຶກສາຫາລືກ່ຽວກັບການຮ່ວມມືດ້ານຢາວັກແຊັງຕ້ານພະຍາດໂຄວິດ - 19, ການຄ້າ, ການປ່ຽນແປງດິນຟ້າອາກາດ ແລະ ລິເລີ່ມການສ້າງພື້ນຖານໂຄງລ່າງຂອງໂລກຄືນໃໝ່; ຫຼັງຈາກນັ້ນ ໄດ້ຢ້ຽມຢາມປະເທດເບລະຢຽມ ພົບປະກັບຜູ້ນຳກຸ່ມປະເທດ NATO ແລະ ສະຫະພາບເອີລົບ ເພື່ອປຶກສາຫາລືກ່ຽວກັບການຂະຫຍາຍອິດທິພົນຂອງ ສປ ຈີນ ແລະ ລັດເຊຍ ໃນພາກພື້ນ ແລະ ບັນຫາການປະກອບສ່ວນທາງດ້ານງົບປະມານໃຫ້ແກ່ NATO. ນອກຈາກນັ້ນ, ທ່ານ ໂຈ ໄບເດິນ, ຍັງໄດ້ພົບປະກັບທ່ານ ວລາເດເມຍ ປູຕິນ, ປະທານາທິບໍດີ ລັດເຊຍ ທີ່ ນະຄອນຫຼວງ Geneva, ປະເທດ ສະວິດ ເພື່ອຟື້ນຟູສາຍພົວພັນຂອງສອງປະເທດ.

7) **ຜົນກອງປະຊຸມຜູ້ນຳກຸ່ມ G7 ຢູ່ Cornwall, ປະເທດອັງກິດ**

Reuters, Aljazeera, ວັນທີ 14/06/21: ກອງປະຊຸມຜູ້ນຳກຸ່ມ G7 ໄດ້ໄຂຂຶ້ນໃນວັນທີ 11/06/2021 ທີ່ເມືອງ Cornwall, ປະເທດອັງກິດ. ກອງປະຊຸມໄດ້ຕົກລົງເຫັນດີຈະສະໜອງ ວັກແຊັງຈຳນວນ 1 ຕື້ ໂດສ ໃຫ້ບັນດາປະເທດທີ່ທຸກຍາກໂດຍທາງກົງ ຫລື ຜ່ານໂຄງການ Covax ຂອງ WHO, ຍົກເລີກນຳໃຊ້ໂຮງງານໄຟຟ້າທີ່ເຜົາຜານດ້ວຍຖ່ານຫີນໂດຍບໍ່ມີເຕັກໂນໂລຊີ ໃນການຄວບຄຸມການປ່ອຍກາກບອນ ແລະ ລະດົມທຶນໃຫ້ໄດ້ $100 ຕື້ ເພື່ອຊ່ວຍເຫຼືອປະເທດທີ່ທຸກຍາກໃນການຫລຸດຜ່ອນການປ່ອຍສານພິດ, ຈຳກັດການເພີ່ມຂຶ້ນຂອງອຸນຫະພູມໂລກໃຫ້ໄດ້ 1,5 ອົງສາ, ຟື້ນຟູເສດຖະກິດຂອງ ກຸ່ມ ໂດຍແນໃສ່ການສ້າງວຽກເຮັດງານທຳ, ລົງທຶນໃສ່ພື້ນຖານໂຄງລ່າງ, ຂັບເຄື່ອນນະວັດຕະກຳ, ສະໜັບສະໜູນ ແລະຍົກລະດັບ ຊັບພະຍາກອນມະນຸດ ເພື່ອຄວາມສະເໝີພາບໃນສັງຄົມ, ນຳສະເໜີໂຄງການ " ສ້າງຄືນໂລກໃໝ່ທີ່ດີກວ່າ" (Build Back Better World ຫຼື B3W) ໂດຍເຫັນດີສ້າງຕັ້ງກອງທຶນ ການເຕີບໂຕສີຂຽວ ແລະ ສະອາດ ສຳລັບການ

ພັດທະນາພື້ນຖານໂຄງລ່າງໃນປະເທດກຳລັງພັດທະນາ, ຕອບໂຕ້ ສປ ຈີນ ໃນລະບົບການຄ້າໂລກ ແລະ ຈຳກັດສິ່ງທ້າທາຍທີ່ທຳລາຍເສດຖະກິດໂລກໃນແບບ " ຍຸຕິທຳ ແລະ ໂປ່ງໃສ ", ຮຽກຮ້ອງໃຫ້ ສປ ຈີນ ເຄົາລົບສິດທິມະນຸດ, ໂດຍສະເພາະໃນບັນຫາ ຊິນຈຽງ, ຮົງກົງ ແລະ ໄຕຫວັນ.

ຂະນະດຽວກັນ ທູດ ສປ ຈີນ ປະຈຳ ອັງກິດ, ການາດາ ແລະ ສະຫະພາບເອີລົບ ໄດ້ຄັດຄ້ານຢ່າງແຂງແຮງຕໍ່ກັບບັນດາຜູ້ນຳກຸ່ມ G7 ທີ່ໄດ້ສະແດງຄວາມເປັນຫ່ວງບັນຫາສິດທິມະນຸດ ໃນ ຊິນຈຽງ, ຮົງກົງ ແລະ ໄຕຫວັນ ຂອງ ສປ ຈີນ ແລະ ວ່າເປັນການບິດເບືອນຄວາມເປັນຈິງ ແລະ ຮຽກຮ້ອງໃຫ້ຜູ້ນຳກຸ່ມດັ່ງກ່າວຢຸດຕິການແຊກແຊງກິດຈະການພາຍໃນຂອງ ສປ ຈີນ.

**8) ກອງປະຊຸມຜູ້ນຳກຸ່ມ NATO**

CGTN, Reuters, ວັນທີ14/06/2021, ໃນກອງປະຊຸມກຸ່ມ NATO ຢູ່ບຣຸກແຊນ, ປະເທດແບນຊິກ, ຜູ້ນຳກຸ່ມນາໂຕ ໄດ້ກ່າວຫາວ່າ ສປ ຈີນ ເປັນໄພຂົ່ມຂູ່ຢ່າງເປັນລະບົບ ( Systemic Challenge) ໃນການຂະຫຍາຍອິດທິພົນ ແລະ ນະໂຍບາຍສາກົນຂອງຈີນ, ໂດຍກ່າວອ້າງວ່າ ສປ ຈີນ ກຳລັງພັດທະນາອາວຸດນິວເຄຼຍ, ອາວາກາດ ແລະ ການໂຈມຕີທາງໄຊເບີ ເຊິ່ງເປັນໄພຂົ່ມຂູ່ຕໍ່ຄວາມເປັນລະບຽບຂອງໂລກ; ແລະ ກ່າວຫາຣັດເຊຍວ່າ ຂະຫຍາຍອິດທິກຳລັງເຂົ້າໄປເອີຣົບຕາເວັນອອກ ແລະ ຂົງເຂດທະເລ Atlantic. ກຸ່ມ NATO ຈະຮ່ວມມືສະກັດກັ້ນການຂະຫຍາຍຕົວຂອງ ສປ ຈີນ ແລະ ຣັດເຊຍ ໃນພາກພື້ນ-ສາກົນ. ກອງປະຊຸມຜູ້ນຳ NATO ຄັ້ງນີ້ໄດ້ລົງນາມ ໃນແຜນງົບປະມານໃນປີໜ້າ ເພື່ອໃຊ້ຈ່າຍປັບປຸງຍຸດທະສາດຂອງພວກເຂົາ. ຂະນະດຽວກັນ, ທ່ານ ປູຕິນ, ປະທານາທິບໍດີ ລັດເຊຍ ໄດ້ປະນາມ NATO ວ່າ ເປັນການກະທຳທີ່ທຳລາຍຄູ່ຮ່ວມມືຍຸດທະສາດຮອບດ້ານ ລະຫວ່າງ ລັດເຊຍ-ຈີນ ແລະ ວ່າ ການຮ່ວມມືທີ່ດີບໍ່ແມ່ນສິ່ງທ້າທາຍຕໍ່ຄວາມໝັ້ນຄົງຂອງໃຜ.

**9) ການພົບປະສຸດຍອດ ອາເມລິກາ-ຣັດເຊຍ**

CGTN, ວັນທີ 16 ມິຖຸນາ 2021, ທ່ານ ໂຈ ໄບເດິນ, ປະທານາທິບໍດີ ສ. ອາເມລິກາ ແລະ ທ່ານ ວລາເດເມຍ ປູຕິນ, ປະທານາທິບໍດີ ລັດເຊຍ ໄດ້ພົບປະກັນ ທີ່ ເຊີແນວ, ປະເທດສະວິດ ເຊິ່ງສອງຝ່າຍໄດ້ປຶກສາຫາລື ຫຼາຍບັນຫາດັ່ງນີ້:

(1) ສ. ອາເມລິກາ ໄດ້ຍົກບັນຫາການລະເມີດສິດທິມະນຸດ ໃນລັດເຊຍ, ສິດເສລີພາບໃນການປາກເວົ້າ, ການກັກໂຕ ທ້າວ ອາເລັກຊີ ນາວານີ, ແລະ ນັກໂທດສັນຊາດ ອາເມລິກາ ທີ່ຖືກກັກໂຕ ຢູ່ໃນລັດເຊຍ.

(2) ສອງຝ່າຍ ໄດ້ເຫັນດີໃຫ້ມີການເຮັດວຽກຮ່ວມກັນຂອງ 2 ກະຊວງການຕ່າງປະເທດ ເພື່ອປຶກສາຫາລື ການສົ່ງເອກອັກຄະລັດຖະທູດ ຂອງຕົນ ກັບໄປປະຈຳການໃນນະຄອນຫຼວງຂອງ ແຕ່ລະປະເທດ.

(3) ມາດຕະການຄວບຄຸມອາວຸດ ແລະ ສະຖຽນລະພາບທາງດ້ານຍຸດທະສາດ ເຊິ່ງທັງສອງຝ່າຍ ເຫັນດີ ຈະສ້າງຕັ້ງກົນໄກການປຶກສາຫາລືສອງຝ່າຍ ກ່ຽວກັບບັນຫາສະຖຽນລະພາບທາງດ້ານຍຸດທະສາດ.

(4) ບັນຫາຄວາມໝັ້ນຄົງທາງໄຊເບີ ເຊິ່ງ ສ.ອາເມລິກາ ໄດ້ກ່າວຫາວ່າກຸ່ມແຮັກເກີ້ ທີ່ມີທີ່ຕັ້ງຢູ່ໃນຣັດເຊຍ ໄດ້ເຈາະເຂົ້າລະບົບບໍລິສັດ Colonial Pipeline ຂອງ ສ.ອາເມລິກາ ແລະ ຮຽກຮ້ອງເອົາຄ່າໄຖ່ມູນຄ່າ 4,4 ລ້ານໂດລາສະຫະລັດ. ທ່ານ ປູຕິນ ໄດ້ກ່າວວ່າ ການໂຈມຕີທາງໄຊເບີໃນໂລກນີ້ ມີຕົ້ນຕໍອັນດັບ 1 ມາຈາກ ສ.ອາເມລິກາ, 2 ການາດາ ແລະ 3 ອັງກິດ.

(5) ບັນຫາຢູເຄຣນ: ທ່ານ ປູຕິນ ໄດ້ກ່າວເຖິງການຈັດຕັ້ງປະຕິບັດຂໍ້ຕົກລົງ/ສົນທິສັນຍາ Minsk ກ່ຽວກັບ ການແກ້ໄຂບັນຫາ ຢູເຄຣນ.

(6) ບັນຫາສາກົນອື່ນໆ ເຊັ່ນ: ການໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳ ໃນຊີຣີ, ບັນຫານິວເຄຼຍ ຂອງອີຣານ, ບັນຫາຜູ້ກໍ່ການຮ້າຍ ໃນອາຟການິສະຖານ ແລະ ບັນຫາ ເບລາຣູສ.

3. ການເຄື່ອນໄຫວຂອງບັນດາພັກເພື່ອນມິດຍຸດທະສາດ

**1) ພັກກອມມູນິດຫວຽດນາມ**

- ວັນທີ 12/06/2021, ຄະນະເລຂາສູນກາງພັກກອມມູນິດຫວຽດນາມ ໄດ້ຈັດກອງປະຊຸມ ອອນລາຍທົ່ວປະເທດ ເພື່ອສະຫຼຸບການປະຕິບັດຄຳສັ່ງເລກທີ 05 ຂອງກົມການເມືອງສະໄໝທີ XII ກ່ຽວກັບການສຶກສາຮ່ຳຮຽນ ແລະ ເຮັດຕາມແນວຄິດ, ຄຸນສົມບັດ, ແບບແຜນການດຳລົງຊີວິດຂອງ ປະທານ ໂຮ່ຈິມິນ, ພາຍໃຕ້ການເປັນປະທານຂອງ ສະຫາຍ ຫງວຽນຝູຈ້ອງ, ເລຂາທິການໃຫຍ່ ແລະ ມີການນຳຂັ້ນສູງເຂົ້າຮ່ວມ. ສະຫາຍ ຫງວຽນ ຝູຈ້ອງ ໄດ້ເນັ້ນໜັກວ່າ ແນວຄິດ, ຄຸນສົມບັດ, ແບບແຜນການດຳລົງຊີວິດຂອງ ປະທານ ໂຮ່ຈິມິນ ແມ່ນຊັບສົມບັດອັນລ້ຳຄ່າຂອງພັກ ແລະ ປະຊາຊົນຫວຽດນາມ, ເປັນເຂັມທິດເຍືອງທາງໃຫ້ແກ່ພາລະກິດປະຕິວັດ, ນຳພາທຸກບາດກ້າວ ແລະ ໄຊຊະນະຂອງການປະຕິວັດຫວຽດນາມ. ດັ່ງນັ້ນ, ການຮ່ຳຮຽນ ແລະ ເຮັດຕາມແນວຄິດ, ຄຸນສົມບັດ ແລະ ແບບແຜນການດຳລົງຊີວິດຂອງ ປະທານ ໂຮ່ຈິມິນ ແມ່ນວຽກງານທີ່ຈຳເປັນ, ແມ່ນໜ້າທີ່ສຳຄັນທີ່ສຸດ ໃນທົ່ວພັກ, ທົ່ວປວງຊົນ, ກ່ອນອື່ນໝົດແມ່ນບັນດາອົງການຈັດຕັ້ງພັກ, ລັດ ແລະ ພະນັກງານ, ສະມາຊິກພັກ ໃນການຝຶກຝົນຫຼໍ່ຫຼອມ, ອຸທິດຕົນ, ຮັບໃຊ້ປະເທດຊາດ, ຮັບໃຊ້ປະຊາຊົນ.
- ວັນທີ 28/05/2021, ສະຫາຍ ເລຮວາຍຈຸງ, ກຳມະການສູນກາງພັກ, ຫົວໜ້າ ຄຕພ ຫວຽດນາມ ໄດ້ເປັນປະທານກອງປະຊຸມທາງໄກກັບພັກກອມມູນິດກູບາ ແລະ ພັກຣັດເຊຍເອກະພາບ ເພື່ອແຈ້ງຜົນສຳເລັດຂອງກອງປະຊຸມໃຫຍ່ຄັ້ງທີ 13 ຂອງພັກກອມມູນິດຫວຽດນາມ, ເຊິ່ງໄດ້ສະແດງຄວາມຂອບໃຈໄປຍັງຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ການນຳພັກລັດເຊຍເອກະພາບ ທີ່ໄດ້ສົ່ງໂທລະເລກອວຍພອນ, ໂທລະເລກຊົມເຊີຍຜົນສຳເລັດຂອງກອງປະຊຸມໃຫຍ່ຄັ້ງທີ 13, ອວຍພອນ ສະຫາຍ ເລຂາທິການໃຫ່ຍ ຫງວຽນຝູຈ້ອງ, ບັນດາການນຳຂັ້ນສູງພັກ, ລັດ ຫວຽດນາມ ສະແດງໃຫ້ເຫັນຄວາມມີຊີວິດຊີວາແຫ່ງສາຍພົວພັນມິດຕະພາບພິເສດ ຫວຽດນາມ-ກູບາ ແລະ ການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ ຫວຽດນາມ-ລັດເຊຍ; ແຈ້ງໃຫ້ຊາບຜົນສຳເລັດຂອງກອງປະຊຸມໃຫ່ຍຄັ້ງທີ 13 ຂອງພັກກອມມູນິດຫວຽດນາມ, ບັນດາເນື້ອໃນເອກະສານສຳຄັນຂອງກອງປະຊຸມກ່ຽວກັບການພັດທະນາເສດຖະກິດ, ວັດທະນະທຳ, ສັງຄົມ, ກ່ຽວກັບວຽກງານກໍ່ສ້າງພັກ ແລະ ລະບົບການເມືອງ, ກ່ຽວກັບແນວທາງນະໂຍບາຍຕ່າງປະເທດ; ບັນດາຜົນສຳເລັດກໍ່ຄືບັນດາຄວາມຫຍຸ້ງຍາກ, ສິ່ງທ້າທາຍ, ຂໍ້ຈຳກັດ, ບັນດາເປົ້າໝາຍ, ທິດທາງໜ້າທີ່ໃນຕໍ່ໜ້າ; ເປົ້າໝາຍການພັດທະນາປະເທດຊາດ ແຕ່ນີ້ຮອດ 2030 ແລະ ວິໄສທັດຮອດປີ 2045 ຕິດພັນກັບ 02 ເຫດການປະຫວັດສາດຄື: ຄົບຮອບ 100 ປີ ການສ້າງຕັ້ງພັກກອມມູນິດຫວຽດນາມ ແລະ ຄົບຮອບ 100 ປີ ວັນສະຖາປະນາ ສສ ຫວຽດນາມ.

**2) ພັກກອມມູນິດຈີນ**

ວັນທີ 31/05/2021, ສູນກາງພັກກອມມູນິດຈີນ ໄດ້ດຳເນີນກອງປະຊຸມກົມການເມືອງສູນກາງພັກ ໂດຍການເປັນປະທານຂອງສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່, ທີ່ນະຄອນຫຼວງປັກກິ່ງ. ກອງປະຊຸມໄດ້ຮັບຟັງບົດລາຍງານກ່ຽວກັບການປະຕິບັດມາດຕະການສຳຄັນໃນການແກ້ໄຂບັນຫາພົນລະເມືອງອາຍຸສູງຈຳນວນຫຼາຍ, ແຜນພັດ ທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ 14 ແລະ ໄດ້ພິຈາລະນາຮັບຮອງເອົາ “ມະຕິຕົກລົງວ່າດ້ວຍການປັບປຸງນະໂຍ ບາຍການກຳເນີດດ້ວຍຄຸນນະພາບ ເພື່ອຊຸກຍູ້ໃຫ້ພົນລະເມືອງມີການພັດທະນາແບບດຸ່ນດ່ຽງເປັນໄລຍະຍາວ”, ເຊິ່ງອັນພົ້ນເດັ່ນກອງປະຊຸມເຫັນວ່າ ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ 18 ຂອງພັກເປັນຕົ້ນມາ ສູນກາງພັກໄດ້ອີງໃສ່ສະຖານະການປ່ຽນແປງຂອງການພັດທະນາຂອງພົນລະເມືອງຈີນ ໄດ້ປະຕິບັດມາດຕະການສົ່ງເສີມການເກີດລູກຜູ້ທີ່ສອງ ແລະ ນະໂຍບາຍອື່ນໆຈຳນວນໜຶ່ງ, ແຕ່ພົນລະເມືອງທີ່ເປັນຄົນຊະລາຍັງນັບມື້ຫຼາຍຂຶ້ນ, ສະນັ້ນ ເພື່ອປັບປຸງໂຄງປະກອບດ້ານພົນລະເມືອງໃຫ້ສົມດຸນຂຶ້ນ ແລະ

ປະຕິບັດຍຸດທະສາດຮັບມືຕໍ່ບັນຫາພົນລະເມືອງເປັນຄົນຊະລາຫຼາຍ ແລະ ຮັກສາທ່າແຮງດ້ານຊັບພະຍາກອນມະນຸດ ຈຶ່ງສະເໜີໃຫ້ມີການກຳນົດນະໂຍບາຍການເກີດລູກ 3 ຄົນ ແລະ ມີນະໂຍບາຍອຸດໜູນອື່ນໆທີ່ກ່ຽວຂ້ອງ.

## 2. ພັກແຮງງານເກົາຫຼີ

Yonhap, ວັນທີ 05/06/2021, ສະຫາຍ ກິມ ເຈິງອຸນ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ໄດ້ເປັນປະທານກອງປະຊຸມກຳມະການກົມການເມືອງ ຄັ້ງທີ 1 ສະໄໝທີ 8 ຂອງ ພັກແຮງງານເກົາຫຼີ, ໂດຍມີ ບັນດາການນຳພາກລັດ, ບັນດາກຳມະການກົມການເມືອງສູນກາງພັກ ແລະ ກຳມະການສຳຮອງກົມການເມືອງສູນກາງພັກ ເຂົ້າຮ່ວມ. ກອງປະຊຸມ ໄດ້ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດນະໂຍບາຍສຳຄັນຂອງພັກ ແລະ ລັດຖະບານ ສຳລັບປີ 2021 ແລະ ປຶກສາຫາລືກ່ຽວກັບ ການດຳເນີນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ເພື່ອວາງມາດຕະການເພີ່ມເຕີມຂອງລັດ ໃນການແກ້ໄຂບັນດາບັນຫາທີ່ຍັງຄົງຄ້າງ ແລະ ຮີບດ່ວນ ໃນຂົງເຂດວຽກງານເສດຖະກິດ ແລະ ການດຳລົງຊີວິດຂອງປະຊາຊົນ. ພ້ອມກັນນັ້ນ, ສະຫາຍ ເລຂາທິການໃຫຍ່ ຍັງໄດ້ມີຄຳເຫັນ ແລະ ວິເຄາະການຈັດຕັ້ງປະຕິບັດວຽກງານນະໂຍບາຍທີ່ສຳຄັນ ໃນຂົງເຂດຕ່າງໆ ໃນ 06 ເດືອນຕົ້ນປີທີ່ຜ່ານມາ ແລະ ໄດ້ເນັ້ນຢ້ຳເຖິງຄວາມຈຳເປັນຕ້ອງໄດ້ດຳເນີນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ເພື່ອສະຫຼຸບການຈັດຕັ້ງປະຕິບັດວຽກງານລວມຂອງລັດຖະບານ ແລະ ວາງມາດຕະຖານເພີ່ມເຕີມ ເພື່ອແກ້ໄຂບັນຫາທີ່ຍັງຄົງຄ້າງໃນ 06 ເດືອນຕົ້ນປີ 2021.

ນອກຈາກນັ້ນ, ກອງປະຊຸມ ຍັງໄດ້ປຶກສາຫາລືກ່ຽວກັບ ການປັບປຸງກົງຈັກໃນບັນດາຄະນະບໍລິຫານງານສູນກາງພັກ ເພື່ອສະເໜີຕໍ່ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 3 ສະໄໝທີ 8 ທີ່ຈະໄຂຂຶ້ນ ໃນຕໍ່ໜ້າ.

# II. ການເຄື່ອນໄຫວວຽກງານຂອງການນຳຄະນະພົວພັນຕ່າງປະເທດສູນກາງພັກ

1. **ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າ ຄຕພ ພົບປະຜ່ານວີດີໂອທາງໄກ ກັບ ສະຫາຍ ຣໍຣເຮ ຫຼຸຍ ໂບຣເຈ ລໍເຣັງໂຊ, ເລຂາທິການສູນກາງພັກ, ຫົວໜ້າຄະນະສຶກສາອົບຮົມ, ວິທະຍາສາດ ແລະ ກິລາສູນກາງພັກ, ຜູ້ຕາງໜ້າພິເສດຂອງ ສະຫາຍ ມີເກນ ດຽດສ ກາເນນ, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ**




ໃນຕອນເຊົ້າຂອງວັນທີ 16 ມິຖຸນາ 2021, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ພົບປະ ຜ່ານວີດີໂອທາງໄກ ກັບ ສະຫາຍ ຣໍຣເຮ ຫຼຸຍ ໂບຣເຈ ລໍເຣັງໂຊ, ເລຂາທິການສູນກາງພັກ, ຫົວໜ້າຄະນະສຶກສາອົບຮົມ, ວິທະຍາສາດ ແລະ ກິລາສູນກາງພັກ, ຜູ້ຕາງໜ້າພິເສດຂອງ ສະຫາຍ ມີເກນ ດຽດສ ກາເນນ, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ ເພື່ອແຈ້ງຜົນສຳເລັດກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກກອມມູນິດກູບາ.

ໃນໂອກາດດັ່ງກ່າວ, ສະຫາຍ ຣໍຣເຮ ຫຼຸຍ ໂບຣເຈ ລໍເຣັງໂຊ ໄດ້ແຈ້ງໃຫ້ຝ່າຍລາວ ຊາບໂດຍຫຍໍ້ ກ່ຽວກັບ ຜົນສຳເລັດຂອງກອງປະຊຸມໃຫຍ່ ຄັ້ງ VIII ຂອງພັກກອມມູນິດກູບາ; ໂດຍຍົກໃຫ້ເຫັນເຖິງຜົນສຳເລັດຮອບດ້ານ ຂອງພັກ, ລັດ ແລະ ປະຊາຊົນກູບາ ທີ່ຍາດມາໄດ້ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແລະ ນຳພາປະເທດກູບາກ້າວສູ່ສັງຄົມນິຍົມທີ່ເຂັ້ມແຂງ.

ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຂອບໃຈຕໍ່ການແຈ້ງໃຫ້ຊາບ ກ່ຽວກັບ ຜົນສຳເລັດຂອງ ກອງປະຊຸມໃຫຍ່ດັ່ງກ່າວ. ພ້ອມທັງໄດ້ຕີລາຄາສູງ ຕໍ່ບົດບາດການນຳຂອງພັກກອມມູນິດກູບາ ຕະຫຼອດ 60 ປີ ຜ່ານມາ, ຊຶ່ງເປັນແກນກາງໃນການເຕົ້າໂຮມຄວາມສາມັກຄີ ແລະ ຊີ້ນຳນຳພາປະຊາຊົນກູບາອ້າຍນ້ອງ ໃນພາລະກິດຕໍ່ສູ້ ເພື່ອຄວາມເປັນເອກະລາດແຫ່ງຊາດ ກໍ່ຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດກ້າວສູ່ສັງຄົມນິຍົມທີ່ເຂັ້ມແຂງ ອັນໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງ

ປະຊາຊົນກູບາອ້າຍນ້ອງ ໄດ້ຮັບການປັບປຸງດີຂຶ້ນ ແລະ ບົດບາດຂອງສາທາລະນະລັດ ກູບາ ໄດ້ຮັບການເຊີດຊູນັບມື້ສູງຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ໃນການພົບປະຄັ້ງນີ້, ສອງຝ່າຍໄດ້ເປັນເອກະພາບກັນຕີລາຄາສູງ ຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ກູບາ ໃນໄລຍະຜ່ານມາ. ນອກຈາກນັ້ນ, ຍັງໄດ້ປຶກສາຫາລືກ່ຽວກັບ ທິດທາງໃນຕໍ່ໜ້າ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບຖານສະຫາຍອ້າຍນ້ອງ ທີ່ມີມາແຕ່ດົນນານລະຫວ່າງ ສອງພັກ ໃຫ້ກ້າວເຂົ້າສູ່ລວງເລິກຢ່າງຕໍ່ເນື່ອງ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ກູບາ, ກູບາ-ລາວ. ພ້ອມທັງໄດ້ແລກປ່ຽນທັດສະນະຕໍ່ສະພາບການພາກພື້ນ ແລະ ສາກົນຈຳນວນໜຶ່ງ ທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ.

ໃນຕອນທ້າຍ, ສະຫາຍ ຫົວໜ້າ ຄຕພ ໄດ້ຕາງໜ້າໃຫ້ພັກ, ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຂອບໃຈ ແລະ ຄວາມຮູ້ບຸນຄຸນເປັນຢ່າງສູງຕໍ່ ພັກ, ລັດ ແລະ ປະຊາຊົນກູບາອ້າຍນ້ອງ ທີ່ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນຕະຫຼອດໄລຍະຜ່ານມາ ແລະ ໄດ້ອວຍພອນແກ່ພັກ, ລັດຖະບານ ແລະ ປະຊາຊົນກູບາອ້າຍນ້ອງ ຈົ່ງສືບຕໍ່ຍາດໄດ້ຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດກູບາສັງຄົມນິຍົມທີ່ເຂັ້ມແຂງ, ໂດຍສະເພາະແມ່ນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກກອມມູນິດກູບາ ໃຫ້ປະກົດຜົນເປັນຈິງ.

## 2. ສະຫາຍ ທອງສະຫວັນ ພົມວິຫານ, ຫົວໜ້າ ຄຕພ ມອບສານຊົມເຊີຍວັນສ້າງຕັ້ງ ພັກກອມມູນິດຈີນ ຄົບຮອບ 100 ປີ



ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າ ຄຕພ ມອບສານອວຍພອນ ຂອງ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ສົ່ງເຖິງ ຄະນະກຳມະການສູນກາງພັກກອມມູນິດຈີນ ແລະ ສານອວຍພອນ ຂອງສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານ ປະເທດ ແຫ່ງ ສປປ ລາວ ສົ່ງເຖິງ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດແຫ່ງ ສປ.ຈີນ ເນື່ອງໃນໂອກາດວັນສ້າງຕັ້ງ ພັກກອມມູນິດຈີນ ຄົບຮອບ 100 ປີ.

### 3. ສະຫາຍ ທອງສະຫວັນ ພົມວິຫານ, ຫົວໜ້າ ຄຕພ ໃຫ້ສຳພາດຕໍ່ສື່ມວນຊົນ ຈີນ-ລາວ ເນື່ອງໃນໂອກາດວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 100 ປີ



ເນື່ອງໃນໂອກາດວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 100 ປີ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ຈີນ-ລາວ ວ່າ: ພາຍໃຕ້ການຊີ້ນຳ ແລະ ນຳພາຂອງພັກກອມມູນິດຈີນ ຕະຫຼອດໄລຍະ 100 ປີຜ່ານມາ, ສປ ຈີນ ໄດ້ຮັບຜົນສຳເລັດຢ່າງໃຫຍ່ຫຼວງຫຼາຍດ້ານ, ໂດຍສະເພາະແມ່ນໄດ້ໃຊ້ເວລາສັ້ນ, ແຕ່ ສປ ຈີນ ສາມາດເຮັດສຳເລັດການແກ້ໄຂ ແລະ ລຶບລ້າງຄວາມທຸກຍາກ ເຮັດໃຫ້ປະຊາກອນນັບຮ້ອຍລ້ານຄົນຫຼຸດພົ້ນອອກຈາກຄວາມທຸກຍາກ, ເປັນເຫດການທີ່ຫາຍາກ ແລະມະຫັດສະຈັນ, ເຊິ່ງຫຼາຍປະເທດບໍ່ສາມາດເຮັດໄດ້. ເວົ້າລວມແລ້ວ, ຕະຫຼອດໄລຍະ 100 ປີ ພາຍໃຕ້ການນຳພາຊີ້ນຳຂອງພັກກອມມູນິດຈີນນັ້ນ, ມີທັງໄລຍະການຕໍ່ສູ້, ການທ້ອນໂຮມປະເທດຊາດ ແລະ ສຳຄັນແມ່ນພາຍຫຼັງການປະຕິຮູບໃນປີ 1978 ເປັນຕົ້ນມາ ເຮັດໃຫ້ ສປ ຈີນ ພັດທະນາຢ່າງກ້າວກະໂດດ. ສ່ວນຕົວຂ້າພະເຈົ້າ ມີຄວາມພາກພູມໃຈຫຼາຍ, ເຊິ່ງມັນສະທ້ອນໃຫ້ເຫັນເຖິງການຍຶດໝັ້ນລັດທິສັງຄົມນິຍົມ ແລະ ປະຕິບັດຈີນໄດ້ຮັບຜົນສຳເລັດຢ່າງເປັນພື້ນຖານ. ສິ່ງທີ່ປະທັບໃຈອີກອັນໜຶ່ງ ກໍ່ແມ່ນການສ້າງສັງຄົມນິຍົມຕາມສີສັນພິເສດຂອງຈີນກໍເປັນອີກຮູບການໜຶ່ງ ໃນການສ້າງສາພັດທະນາຂອງ ສປ ຈີນ. ຂ້າພະເຈົ້າ ມີຄວາມເຊື່ອໝັ້ນວ່າ ຜົນສຳເລັດທີ່ຍາດມາໄດ້ນັ້ນໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງຈາກ ປະຊາຊົນບັນດາເຜົ່າ ລວມທັງ ເພື່ອນມິດສາກົນ ອັນນີ້ສະແດງໃຫ້ເຫັນວ່າ ພັກກອມມູນິດຈີນ ໄດ້ປະຕິບັດຕາມອຸດົມການທີ່ຖືກຕ້ອງ ແລະ ພັກກອມມູນິດຈີນຈະສືບຕໍ່ຍາດໄດ້ໄຊຊະນະຕະຫຼອດໄປ.

**4. ສະຫາຍ ທອງສະຫວັນ ພົມວິຫານ, ຫົວໜ້າ ຄຕພ ວາງພວງມາລາໄຫວ້ອາໄລ ສະຫາຍ ວິງເພັດ ໄຊເກີຍາຈິງຕົວ**



ວັນທີ 31/5/2021, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າ ຄຕພ ໄດ້ນຳພາຄະນະໄປວາງພວງມາລາໄຫວ້ອາໄລເຖິງດວງວິນຍານຂອງ ສະຫາຍ ວິງເພັດ ໄຊເກີຍາຈິງຕົວ, ອະດີດກຳມະການສູນກາງພັກ, ອະດີດເລຂາພັກແຂວງ, ເຈົ້າແຂວງຫລວງພະບາງ, ອະດີດຮອງປະທານສູນກາງແນວລາວສ້າງຊາດ, ອະດີດຮອງປະທານສະພາແຫ່ງຊາດ, ອະດີດປະທານກວດກາສູນກາງພັກ, ອະດີດປະທານສູນກາງສະຫະພັນກຳມະບານລາວ ທີ່ໄດ້ເສຍຊີວິດ ວັນທີ 30/5/2021.

**5. ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າ ຄຕພ ເຂົ້າຮ່ວມກອງປະຊຸມພິເສດ ກ່ຽວກັບ ໂຄວິດ-19 ຜ່ານວີດີໂອທາງໄກ**




ໃນວັນທີ 25 ພຶດສະພາ 2021 ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າ

ຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມພິເສດ ກ່ຽວກັບ ໂຄວິດ-19 ຄັ້ງທີ 2 ຜ່ານວີດີໂອທາງໄກ, ເຊິ່ງຈັດຂຶ້ນໂດຍ ກອງເລຂາອົງການຂອງບັນດາພັກການເມືອງໃນອາຊີ (ICAPP) ພາຍໃຕ້ 2 ຫົວຂໍ້ຕົ້ນຕໍຄື: (1) ການພັດທະນາການຕອບໂຕ້ພະຍາດລະບາດໂຄວິດ-19 ທີ່ມີປະສິດທິພາບຫຼາຍຂຶ້ນໃນລະດັບພາກພື້ນ ແລະ ສາກົນ; ແລະ (2) ການບັນລຸການຟື້ນຟູເສດຖະກິດຮອບດ້ານ ໃນສະພາບແວດລ້ອມຫຼັງ ໂຄວິດ-19. ເຂົ້າຮ່ວມໃນກອງປະຊຸມຄັ້ງນີ້ ມີຜູ້ແທນຈາກ 24 ພັກການເມືອງ ທີ່ມາຈາກ 19 ປະເທດໃນອາຊີ, ຜູ້ຕາງໜ້າຈາກອົງການອະນາໄມໂລກ (WHO), ທະນາຄານໂລກ (World Bank), ສະຖາບັນວັກແຊ້ງສາກົນ, ຄະນະກຳມະການເສດຖະກິດ ແລະ ສັງຄົມຂອງອົງການສະຫະປະຊາຊາດປະຈຳ ພາກພື້ນອາຊີ ແລະ ປາຊີຟິກ ແລະ ອົງການກອງປະຊຸມຖາວອນຂອງບັນດາພັກການເມືອງອາເມລິກາລາຕິນ ແລະ ກາຣາອິບ (COPPPAL).

ໃນກອງປະຊຸມດັ່ງກ່າວ, ຫົວໜ້າຄະນະຜູ້ແທນພັກ ປປ ລາວ ໄດ້ປະກອບຄຳເຫັນ ໂດຍໄດ້ຍົກໃຫ້ເຫັນຄວາມພະຍາຍາມ ແລະ ຄວາມຮັບຜິດຊອບຮ່ວມກັນຂອງບັນດາປະເທດໃນພາກພື້ນອາຊີ ກໍ່ຄື ທົ່ວໂລກ ໃນການສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ນັບແຕ່ມີການແຜ່ລະບາດຂອງພະຍາດດັ່ງກ່າວ, ເວົ້າສະເພາະແມ່ນການຕ້ານພະຍາດໂຄວິດ-19 ຢູ່ ສປປ ລາວ, ເຊິ່ງ ພັກ ແລະ ລັດຖະບານ ສປປ ລາວ ໄດ້ວາງ ແລະ ນຳພາຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການຕ່າງໆ ແຕ່ຫົວທີ ໂດຍຖືຜົນປະໂຫຍດ ແລະ ຄວາມປອດໄພຂອງປະຊາຊົນເປັນກົກ; ນອກຈາກນີ້ ກໍ່ໄດ້ຮັບການຮ່ວມມື ແລະ ຊ່ວຍເຫລືອ ທັງທາງດ້ານວັດຖຸ ແລະ ຈິດໃຈ ຢ່າງທັນການຂອງບັນດາປະເທດເພື່ອນມິດ ອັນໄດ້ເຮັດໃຫ້ການປ້ອງກັນ ແລະ ສະກັດກັ້ນພະຍາດໂຄວິດ-19 ຢູ່ ສປປ ລາວ ໄດ້ຮັບຜົນສຳເລັດເປັນກ້າວໆມາ.

**6. ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າ ຄຕພ ເຂົ້າຮ່ວມກອງປະຊຸມໜ່ວຍງານຜູ້ຊ່ຽວຊານສາກົນ ລະຫວ່າງ ພັກການເມືອງ ຜ່ານວີດີໂອທາງໄກ**




ໃນວັນທີ 11 ມິຖຸນາ 2021 ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມໜ່ວຍງານຜູ້ຊ່ຽວຊານສາກົນ ລະຫວ່າງ ພັກການເມືອງ ຜ່ານວີດີໂອທາງໄກ ໂດຍການເປັນເຈົ້າພາບຂອງພັກຣັດເຊຍເອກະພາບ ພາຍໃຕ້ຫົວຂໍ້: "ບົດບາດຂອງບັນດາກຳລັງການເມືອງທີ່ມີ

ຄວາມຮັບຜິດຊອບຂອງຣັດເຊຍ ແລະ ບັນດາປະເທດອາຊຽນ ໃນການເສີມສ້າງໂຄງສ້າງດ້ານຄວາມໝັ້ນຄົງ ແລະ ການຮ່ວມມືໃນພາກພື້ນອາຊີ-ປາຊີຟິກ”. ກອງປະຊຸມຄັ້ງນີ້ ຈັດຂຶ້ນໃນໂອກາດການສະເຫລີມສະຫລອງຄົບຮອບ 25 ປີ ການເປັນຄູ່ເຈລະຈາອາຊຽນ-ຣັດເຊຍ ໂດຍມີຈຸດປະສົງເພື່ອປຶກສາຫາລື ແລະ ແລກປ່ຽນບົດຮຽນ ລະຫວ່າງ ບັນດາພັກການເມືອງທີ່ເຂົ້າຮ່ວມ ແລະ ເພື່ອເປັນການກະກຽມໃຫ້ແກ່ກອງປະຊຸມໂຕະມົນ ລະຫວ່າງ ພັກຣັດເຊຍເອກະພາບ ແລະ ບັນດາພັກການເມືອງຂອງປະເທດອາຊຽນ ທີ່ຈະຈັດຂຶ້ນໃນທ້າຍເດືອນມິຖຸນານີ້.

ໃນກອງປະຊຸມດັ່ງກ່າວ, ສະຫາຍ ສິມພອນ ສີຈະເລີນ ໄດ້ປະກອບຄຳເຫັນໂດຍໄດ້ຕີລາຄາສູງ ແລະ ຊົມເຊີຍຕໍ່ການເປັນເຈົ້າພາບຈັດກອງປະຊຸມດັ່ງກ່າວ ຂອງພັກຣັດເຊຍເອກະພາບ; ຕີລາຄາສະພາບການພາກພື້ນ ແລະ ສາກົນ ໂດຍສະເພາະແມ່ນຢູ່ຂົງເຂດອາຊີ-ປາຊີຟິກ; ຍົກໃຫ້ເຫັນບັນດາຜົນສຳເລັດຂອງອາຊຽນໃນໄລຍະຜ່ານມາ ໂດຍສະເພາະໃນຂົງເຂດການເມືອງ - ຄວາມໝັ້ນຄົງ ເປັນຕົ້ນ: ການສ້າງຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ ບົນພື້ນຖານຫຼັກການທີ່ອາຊຽນເປັນຜູ້ສ້າງຂຶ້ນ ແລະ ໄດ້ກຳນົດໄວ້ໃນກົດບັດຂອງຕົນ ເຊິ່ງໄດ້ເອື້ອອຳນວຍໃຫ້ແກ່ການຮ່ວມມື ໃນຂົງເຂດເສດຖະກິດ ແລະ ວັດທະນະທຳ-ສັງຄົມລະຫວ່າງປະເທດສະມາຊິກອາຊຽນດ້ວຍກັນ ກໍຄືກັບພາຍນອກ ລວມທັງ ຣັດເຊຍ, ເຊິ່ງເປັນໜຶ່ງໃນຄູ່ເຈລະຈາອາຊຽນ ທີ່ມີຄວາມໝາຍສຳຄັນ ແລະ ຫ້າວຫັນໃນການຂັບເຄື່ອນວຽກງານລວມຂອງອາຊຽນ. ສິ່ງດັ່ງກ່າວ ໄດ້ປະກອບສ່ວນສຳຄັນໃນການສົ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ. ຫົວໜ້າຄະນະຜູ້ແທນພັກ ປປ ລາວ ຍັງໄດ້ຍົກໃຫ້ເຫັນການປະກອບສ່ວນຢ່າງຕັ້ງໜ້າຂອງພັກ ປປ ລາວ ເຂົ້າໃນການເພີ່ມທະວີຄວາມໝັ້ນຄົງພາກພື້ນ ແລະ ສາກົນ, ການຢຶດໝັ້ນ ແລະ ເສີມຂະຫຍາຍລັດທິຫລາຍຝ່າຍ; ການຢຶດໝັ້ນແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ຄຽງຄູ່ກັບການພັດທະນາເສດຖະກິດ-ສັງຄົມ ແລະ ການຮ່ວມມືສາກົນ ບົນພື້ນຖານນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ເພື່ອບັນລຸ 2 ໜ້າທີ່ຍຸດທະສາດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຂອງ ສປປ ລາວ; ສະແດງຄວາມໝາຍໝັ້ນໃນການສືບຕໍ່ຮ່ວມມືຢ່າງໃກ້ຊິດ ກັບ ບັນດາປະເທດເພື່ອນມິດ ແລະ ຄູ່ຮ່ວມມືອື່ນໆ ໃນພາກພື້ນ ແລະ ສາກົນ ລວມທັງ ຣັດເຊຍ ເຊິ່ງເປັນເພື່ອນມິດທີ່ໃກ້ຊິດ ແລະ ເປັນຄູ່ຮ່ວມມືຍຸດທະສາດດ້ານຄວາມໝັ້ນຄົງໃນພາກພື້ນ ອາຊີ-ປາຊີຟິກ ໃນການສືບຕໍ່ເພີ່ມທະວີການຮ່ວມມືໃນຂົງເຂດຕ່າງໆ ເພື່ອໃຫ້ພາກພື້ນອາຊີ-ປາຊີຟິກ, ອາຊຽນ ແລະ ພາກພື້ນອື່ນໆໃນໂລກ ມີສະຖຽນລະພາບ, ຄວາມໝັ້ນຄົງ ແລະ ຄວາມວັດທະນະຖາວອນ.

**7. ສະຫາຍ ສິມພອນ ສີຈະເລີນ, ຮອງຫົວໜ້າ ຄຕພ ເຂົ້າຮ່ວມກອງປະຊຸມສຳມະນາພິເສດໃນຫົວຂໍ້ສະເພາະ ຜ່ານວີດີໂອທາງໄກ**




ໃນວັນທີ 16 ມິຖຸນາ 2021 ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ສິມພອນ ສີຈະເລີນ, ຮອງຫົວໜ້າ ຄະນະ

ພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາພິເສດໃນຫົວຂໍ້ສະເພາະ: "ເລື່ອງຂອງພັກກອມມູນິດຈີນ: ຄວາມສຳເລັດຂອງ ຊຽງໄຮ້ ໃນການປະຕິບັດແນວຄິດ ສີ ຈິ້ນຜິງ ກ່ຽວກັບ ສັງຄົມນິຍົມ ທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່" ເຊິ່ງໄດ້ຈັດຂຶ້ນຢູ່ຊຽງໄຮ້, ສປ ຈີນ ໂດຍຜ່ານວີດີໂອທາງໄກ ພາຍໃຕ້ຫົວຂໍ້ຫຼັກ: "ດຳລົງຊີວິດ ຕາມຄວາມໄຝ່ຝັນ, ແບ່ງປັນສິ່ງມະຫັດສະຈັນ" ໂດຍການເປັນເຈົ້າພາບຮ່ວມຂອງ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ແລະ ຄະນະພັກນະຄອນຊຽງໄຮ້, ເຊິ່ງມີຜູ້ແທນ 740 ກວ່າຄົນ ຈາກ 126 ພັກການເມືອງ, ອົງການສັງຄົມພົນລະເຮືອນ ຈາກ 100 ກວ່າປະເທດເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ຈັດຂຶ້ນໃນທ່າມກາງບັນຍາກາດທີ່ພັກກອມມູນິດຈີນ ພວມກະກຽມສະເຫຼີມສະຫຼອງວັນສ້າງຕັ້ງພັກຄົບຮອບ 100 ປີ ໃນປີ 2021 ໂດຍມີຈຸດປະສົງເຜີຍແຜ່ບັນດາຜົນສຳເລັດອັນພົ້ນເດັ່ນ ແລະ ມະຫັດສະຈັນ ພາຍໃຕ້ການນຳພາອັນເຂັ້ມແຂງຂອງພັກກອມມູນິດຈີນ ໂດຍມີ ສະຫາຍ ສີ ຈິ້ນຜິງ ເປັນແກນກາງໃນການປະຕິບັດຕາມເຈດຕະນາລົມອັນເປັນຮາກເຫງົ້າຂອງພັກ ແລະ ພາລະກິດໃນການສ້າງຄວາມເປັນຢູ່ທີ່ດີໃຫ້ແກ່ປະຊາຊົນ, ການຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງຊາດຈີນ, ການປຸກລະດົມ ແລະ ເຂົ້າຮ່ວມ ຂອງປະຊາຊົນຈີນ ໃນການບັນລຸຜົນສຳເລັດອັນພົ້ນເດັ່ນຂອງການພັດທະນາ, ການສ້າງປະຊາຄົມຮ່ວມຊະຕາກຳຂອງມວນມະນຸດ ແລະ ການປະກອບສ່ວນສຳຄັນເຂົ້າໃນການສົ່ງເສີມສັນຕິພາບ ແລະ ການພັດທະນາຂອງໂລກ. ເວົ້າສະເພາະ ກໍ່ແມ່ນບັນດາຜົນສຳເລັດຂອງນະຄອນຊຽງໄຮ້ ທີ່ໄດ້ປະຕິບັດຕາມທິດຊີ້ນຳຂອງແນວຄິດ ສີ ຈິ້ນຜິງ ກ່ຽວກັບ ສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ ໃນການສົ່ງເສີມການພັດທະນາແບບປະສົມປະສານທາງດ້ານເສດຖະກິດ, ການເມືອງ, ວັດທະນະທຳ ແລະ ລະບົບນິເວດ ເພື່ອເລັ່ງລັດຈັງຫວະການສ້າງນະຄອນຊຽງໄຮ້ໃຫ້ກາຍເປັນມະຫານະຄອນສັງຄົມນິຍົມທັນສະໄໝທີ່ມີຊື່ສຽງລະດັບໂລກ ແລະ ກາຍເປັນນະຄອນຕົວແບບແຫ່ງຊາດທຳອິດ ທີ່ເດີນໜ້າການປະຕິຮູບ ແລະ ເປີດກວ້າງສູ່ພາຍນອກໂດຍມີມາດຕະຖານສູງຂຶ້ນ ແລະ ເປັນຕົວແບບແຫ່ງຄວາມສຳເລັດບົນເສັ້ນທາງແຫ່ງການສ້າງ ສປ ຈີນ ໃຫ້ກາຍເປັນປະເທດສັງຄົມນິຍົມທັນສະໄໝ ຢ່າງສົມບູນ.